ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ພຶດສະພາ 2026
ປີທີ 15
ສະບັບທີ 1066

## ປິດກອງປະຊຸມຄົບຄະນະ ຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກ




(ສພຊ) - ກອງປະຊຸມຄົບຄະນະຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ປິດລົງດ້ວຍຜົນສຳເລັດອັນຈົບງາມ ໃນຕອນບ່າຍວັນທີ 21 ພຶດສະພານີ້. ຕະຫຼອດໄລຍະ 3 ວັນທີ່ຜ່ານມາ ພາຍໃຕ້ການເປັນປະທານຂອງສະຫາຍທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງ

ອ່ານຕໍ່ໜ້າ 8

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນປະຈຳເດືອນພຶດສະພາ




(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດສະໄໝວິສາມັນປະຈຳເດືອນພຶດສະພາ 2026 ໄດ້ດຳເນີນຂຶ້ນໃນວັນທີ 18 ພຶດສະພາຜ່ານມາ ໂດຍການເປັນປະທານຂອງທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ມີບັນດາທ່ານຮອງປະທານ ແລະ ກຳມະການໃນຄະນະປະຈຳສະພາແຫ່ງຊາດ, ລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ, ຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເປັນຕົ້ນແມ່ນພິຈາລະນາໜັງສືສະເໜີຂອງລັດຖະບານ ເລກທີ 16/ລບ, ລົງວັນທີ 03/3/2026 ກ່ຽວກັບການໃຫ້ສັດ

ອ່ານຕໍ່ໜ້າ 7




ການເຄື່ອນໄຫວຂອງຜູ້ແທນ ຕ້ອງເລີ່ມຈາກຜົນປະໂຫຍດລວມຂອງປະເທດ; ພ້ອມກັນນັ້ນ, ກໍເອົາໃຈໃສ່ຢ່າງເໝາະສົມເຖິງຜົນປະໂຫຍດຂອງທ້ອງຖິ່ນທີ່ໄດ້ເລືອກຕັ້ງຕົນຂຶ້ນມາ ແລະ ຫົວໜ່ວຍວຽກງານທີ່ຕົນສັງກັດຢູ່.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 206)

ອ່ານຕໍ່ສະບັບໜ້າ




## ຍົກສູງຄວາມສາມາດການປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມໃຫ້ສະມາຊິກສະພາເພດຍິງ




ອ່ານຕໍ່ໜ້າ 5

## ສຳມະນາການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດ

(ສພຊ) - ກອງປະຊຸມສຳມະນາວິທະຍາສາດກ່ຽວກັບການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດ ໄດ້ຈັດຂຶ້ນລະຫວ່າງວັນທີ 18-20 ພຶດສະພາ 2026 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ

ອ່ານຕໍ່ໜ້າ 8



## ຮອງປະທານສະພາແຫ່ງຊາດ ຮັບການເຂົ້າຢ້ຽມຂ່ຳນັບຂອງທູດອິດສະຕຣາລີ



(ສພຊ) - ຕອນບ່າຍວັນທີ 15 ພຶດສະພານີ້, ທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ນາງ ເມແກນ ຈອນສ໌ (Megan Jones) ເອກອັກຄະລັດຖະທູດອິດສະຕຣາລີ ປະຈຳ ສປປລາວ; ໂອກາດນີ້, ທ່ານ ວິໄລວົງ ບຸດດາຄຳ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງໃນການພົບປະຄັ້ງນີ້ ເປັນການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງປະເທດລາວ-ອິດສະຕຣາລີເວົ້າລວມ, ເວົ້າສະເພາະ ສອງອົງການນິຕິບັນຍັດ ກໍຄືສະພາແຫ່ງຊາດລາວ ແລະ ສະຖານທູດອິດສະຕຣາລີ ປະຈຳ ສປປລາວ ໃຫ້ນັບມື້ໄດ້ຮັບການພັດທະນາ.

ພ້ອມດຽວກັນ, ທ່ານຮອງປະທານສະພາແຫ່ງຊາດຍັງໄດ້ສະເໜີແລກປ່ຽນທິດທາງແຜນການການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າ ເປັນຕົ້ນ: ສະໜັບສະໜູນການທັດສະນະສຶກສາ, ແລກປ່ຽນບົດຮຽນ ກໍຄືຝຶກອົບຮົມໃນຫົວຂໍ້ຕ່າງໆທີ່ກ່ຽວກັບ ສສຊ ໜຸ່ມ ແລະ ວິຊາການຫຼັກແຫຼ່ງຂອງສະພາແຫ່ງຊາດລາວກັບ ອິດສະຕຣາລີ ທີ່ຈະເປັນທ່າແຮງໃນການພົວພັນແລະແລກປ່ຽນບົດຮຽນກັບສາກົນ ໃຫ້ມີປະສິດທິພາບຂຶ້ນຕື່ມ ໂດຍສະ

ອ່ານຕໍ່ໜ້າ 4

**ຊົມເຊີຍວັນຜ່າວົງປິດລ້ອມຂອງກອງພັນທີ 2 ທີ່ທົ່ງໄຫຫີນ, ແຂວງຊຽງຂວາງ ຄົບຮອບ 67 ປີ ຢ່າງສຸດໃຈ!**

# ປະທານ ກຕທ ຮັບການເຂົ້າຢ້ຽມຂໍ່ານັບຂອງທູດຕ່າງປະເທດ



(ສພຊ) - ຕອນບ່າຍວັນທີ 14 ພຶດສະພາ 2026 ທ່ານ ໂພໄຊ ໄຊຄຳພິທູນ ປະທານກຳມາທິການການຕ່າງປະເທດ (ກຕທ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານນາງເອນນາ ເອສເທີ ວຽນ ວາລເດສ (Enna Esther Viant Valdes) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ກູບາ ປະຈຳ ສປປລາວ. ທ່ານປະທານ ກຕທ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍທ່ານເອກອັກຄະລັດຖະທູດ ຕໍ່ການເຄື່ອນໄຫວທີ່ຫ້າວຫັນຢູ່ ສປປລາວ ໃນການປະກອບສ່ວນອັນສຳຄັນຫຼາຍຢ່າງຂອງການພົວພັນຮ່ວມມືລະຫວ່າງສອງພັກສອງລັດ; ພ້ອມກັນນີ້, ກໍໄດ້ແຈ້ງສະພາບການເຄື່ອນໄຫວວຽກງານ ໂດຍສະເພາະການປັບປຸງກົງຈັກການຈັດຕັ້ງຂອງສະພາແຫ່ງຊາດລາວ ຊຸດທີ X, ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນຕໍ່ກັບສະພາບການພາຍໃນຂອງຕົນ ແລະ ສະພາບການພາກພື້ນ ແລະ ສາກົນ.

ທ່ານເອກອັກຄະລັດຖະທູດ ໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານປະທານກຳມາທິການການຕ່າງປະເທດທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ໃຫ້ຄຳໝາຍໝັ້ນວ່າຈະສືບຕໍ່ຊຸກຍູ້ການຮ່ວມມືລະຫວ່າງສອງປະເທດໃຫ້ເຂົ້າສູ່ລວງເລິກຍິ່ງໆຂຶ້ນ ເວົ້າລວມ, ເວົ້າສະເພາະ ກໍຄືການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດແຫ່ງອຳນາດປະຊາຊົນກູບາ ແລະ ສະພາແຫ່ງຊາດລາວໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ.

ຕອນສວາຍວັນຕໍ່ມາ, ທ່ານ ໂພໄຊ ໄຊຄຳພິທູນ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຈອງ ຢອງ ຊູ (Jung Yung Soo) ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ສ.ເກົາຫຼີ ແລະ ທ່ານ ນາງ ເມແກນ ຈອນສ໌ (Megan Jones) ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ອົດສະຕຣາລີ ປະຈຳ ສປປລາວ.



ໃນການຕ້ອນຮັບທ່ານ ຈອງ ຢອງ ຊູ, ທ່ານ ໂພໄຊ ໄຊຄຳພິທູນ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍທ່ານເອກອັກຄະລັດຖະທູດ ແຫ່ງ ສ.ເກົາຫຼີຕໍ່ການເຄື່ອນໄຫວທີ່ຫ້າວຫັນໃນການປະກອບສ່ວນອັນສຳຄັນຫຼາຍຢ່າງຂອງການພົວພັນຮ່ວມມືລະຫວ່າງສອງພັກສອງລັດ ແລະ ການຊ່ວຍເຫຼືອຂອງລັດຖະບານ ສ.ເກົາຫຼີ ຢູ່ ສປປລາວ; ພ້ອມກັນນີ້, ທັງສອງຝ່າຍກໍໄດ້ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາກ່ຽວກັບການຮ່ວມມືໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ໂດຍສະເພາະດ້ານແຮງງານ, ການຄຸ້ມຄອງແຮງງານຂ້າມແດນ, ການປາບປາມບັນຫາອາຊະຍາກຳຂ້າມຊາດ ແລະ ການພັດທະນາທັກສະສີມືແຮງງານລາວ ໂດຍຜ່ານການສ້າງຕັ້ງສູນຝຶກອົບຮົມວິຊາຊີບ, ການສອນພາ ສາຕ່າງປະເທດ ແລະ ການກະກຽມຄວາມພ້ອມຂອງແຮງງານລາວກ່ອນເດີນທາງໄປເຮັດວຽກຢູ່ຕ່າງປະເທດ. ທ່ານເອກອັກຄະລັດຖະທູດ ສ.ເກົາຫຼີ ໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານປະທານກຳມາທິການການຕ່າງປະເທດທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນແລະຈະສືບຕໍ່ຊຸກຍູ້ການຮ່ວມມືລະຫວ່າງສອງປະເທດໃຫ້ເຂົ້າສູ່ລວງເລິກຍິ່ງໆຂຶ້ນ ເວົ້າລວມ, ເວົ້າສະເພາະກໍຄືການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດ ສ.ເກົາຫຼີ - ສປປລາວ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ ແລະ ຢືນຢັນວ່າ ລັດຖະບານ ສ.ເກົາຫຼີ ຈະສືບຕໍ່ຮັບປະກັນສິດ, ຄວາມປອດໄພ ແລະ ຜົນປະໂຫຍດອັນຊອບທຳຂອງແຮງງານລາວທີ່ໄປເຮັດວຽກຢູ່ ສ.ເກົາຫຼີ ໂດຍຜ່ານກົນໄກການຄຸ້ມຄອງ, ລະບົບສາຍດ່ວນຊ່ວຍເຫຼືອແລະການສະໜອງຄວາມຊ່ວຍເຫຼືອທາງກົດໝາຍໃຫ້ແກ່ແຮງງານລາວ ແລະ ຕ່າງປະເທດ.

ໃນການຕ້ອນຮັບທ່ານນາງ ເມແກນ ຈອນສ໌, ທ່ານ ໂພໄຊ ໄຊຄຳພິທູນ ໄດ້ສະແດງຄວາມຍິນດີຕ້ອນຮັບແລະຂອບໃຈຕໍ່ການສະໜັບສະໜູນອັນຕໍ່ເນື່ອງຂອງລັດຖະບານອົດສະຕຣາລີ ຕໍ່ການພັດທະນາຂອງ ສປປລາວ ແລະ ຈະສືບຕໍ່ຮ່ວມມືຢ່າງໃກ້ຊິດເພື່ອຜັນຂະຫຍາຍບັນດາຂໍ້ຕົກລົງຮ່ວມທີ່ສອງລັດຖະບານລົງນາມ ໃຫ້ເກີດເປັນຮູບປະທຳ. ທ່ານເອກອັກຄະລັດຖະທູດອົດສະຕຣາລີ ໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານປະທານກຳມາທິການການຕ່າງປະເທດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຈະສືບຕໍ່ຊຸກຍູ້ການຮ່ວມມືລະຫວ່າງສອງປະເທດໃຫ້ເຂົ້າສູ່ລວງເລິກຍິ່ງໆຂຶ້ນ ເວົ້າລວມ, ເວົ້າສະເພາະກໍຄືການພົວພັນຮ່ວມມືລະຫວ່າງລັດຖະສະພາອົດສະຕຣາລີ ແລະ ສະພາແຫ່ງຊາດລາວ; ພ້ອມດຽວກັນ, ກໍຢືນຢັນວ່າ ສປປລາວ ຍັງຄົງເປັນຄູ່ຮ່ວມມືສຳຄັນ ແລະ ຈະສືບຕໍ່ສະໜັບສະໜູນບັນດາໂຄງການພັດທະນາທີ່ສຳຄັນ ໂດຍສະເພາະໃນຂົງເຂດການສຶກສາ, ສາທາລະນະສຸກ ແລະ ການພັດທະນາຂີດຄວາມສາມາດໃຫ້ແກ່ບຸກຄະລາກອນຂອງສະພາແຫ່ງຊາດລາວ.



# ປະທານ ກປຊສ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທູດ ສ.ເກົາຫຼີ



(ສພຊ) - ວັນທີ 15 ພຶດສະພາຜ່ານມາ, ທ່ານ ພົຈວ. ສຸລິໄຊ ພົຈິດ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຈອງ ຢອງ ຊູ (Jung Yung Soo) ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ສ.ເກົາຫຼີ ປະຈຳ ສປປລາວ. ທ່ານປະທານ ກປຊສ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍຕໍ່ການປະຕິບັດໜ້າທີ່ຢູ່ ສປປລາວຂອງທ່ານເອກອັກຄະລັດຖະທູດ (ນັບແຕ່ປີ 2022 - ປັດຈຸບັນ) ເຊິ່ງເຫັນໄດ້ເຖິງຄວາມຫ້າວຫັນໃນການຊຸກຍູ້ດ້ານຕ່າງໆ ໂດຍສະເພາະວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ກໍເປັນວຽກງານໜຶ່ງທີ່ສອງປະເທດໄດ້ມີການຮ່ວມມືອັນດີນຳກັນ; ການພົບປະຄັ້ງນີ້ ເປັນໂອກາດດີທີ່ຈະໄດ້ປຶກສາຫາລືແລກປ່ຽນເພື່ອຊຸກຍູ້ເສີມຂະຫຍາຍສາຍພົວພັນມິດຕະພາບລະຫວ່າງ ສປປລາວ - ສ.ເກົາຫຼີ ເວົ້າລວມ, ເວົ້າສະເພາະກໍຄືຂົງເຂດປກຊ-ປກສ ໃຫ້ນັບມື້ໄດ້ຮັບການຂະຫຍາຍຕົວຍິ່ງໆຂຶ້ນໄປ.

ທ່ານເອກອັກຄະລັດຖະທູດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ສາຍພົວພັນ ແລະ ການຮ່ວມມືລະຫວ່າງ ສ.ເກົາຫຼີ - ສປປລາວ ທີ່ມີມູນເຊື້ອອັນດີງາມມາແຕ່ດົນນານ ແລະ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ ລະຫວ່າງສອງປະເທດ; ມີການຮ່ວມມືທີ່ດີໃນຫຼາຍດ້ານ, ສະເພາະຂົງເຂດ ປກຊ-ປກສ ກໍມີຫຼາຍດ້ານເຊັ່ນ: ການຮ່ວມມືຕ້ານອາຊະຍາກຳຂ້າມຊາດ ແລະ ຄວາມປອດໄພທາງໄຊເບີ, ການຊ່ວຍເຫຼືອດ້ານອຸປະກອນເກັບກູ້ລະເບີດບໍ່ທັນແຕກໃຫ້ແກ່ ສປປລາວ.

ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດ ສ.ເກົາຫຼີ ໄດ້ມີການພົວພັນ ແລະ ຮ່ວມມືນຳກັນເປັນຢ່າງດີ ເຊິ່ງມີການພົບປະແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆໃນຫຼາຍລະດັບ, ແລກປ່ຽນສານຊົມເຊີຍ ແລະ ສານອວຍພອນໃນໂອກາດສຳຄັນຕ່າງໆ; ພ້ອມນີ້, ສອງຝ່າຍຍັງມີການຮ່ວມມືສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ສຸພາວັນ ທອມສະນິດ)**

# ແລກປ່ຽນບົດຮຽນວຽກງານຫ້ອງມູນເຊື້ອ




(ສພຊ) - ວັນທີ 21 ພຶດສະພານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີການພົບປະແລກປ່ຽນບົດຮຽນກ່ຽວກັບວຽກງານຫ້ອງມູນເຊື້ອ ລະຫວ່າງກົມສື່ມວນຊົນ, ຫ້ອງວ່າການສະພາແຫ່ງຊາດ ກັບ ສະຖາບັນການທະນາຄານ ແຫ່ງ ສປປລາວ ໂດຍການເຂົ້າຮ່ວມຂອງທ່ານແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າກົມສື່ມວນຊົນ, ທ່ານນາງ ນິລັນດອນ ແກ້ວມະນີສີ ຮອງຜູ້ອຳນວຍການສະຖາບັນການທະນາຄານ ເຊິ່ງມີຄະນະພະແນກ ແລະ ວິຊາການຂອງສອງພາກສ່ວນເຂົ້າຮ່ວມ.

ທ່ານຮອງຫົວໜ້າກົມສື່ມວນຊົນ ໄດ້ລາຍງານໂດຍຫຍໍ້ໃຫ້ຊາບກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່; ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ; ການປະຕິບັດໜ້າທີ່ວຽກງານຫ້ອງມູນເຊື້ອ ແລະ ປະຫວັດສາດ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ.

ສອງຝ່າຍໄດ້ປຶກສາຫາລືກ່ຽວກັບການສ້າງຕັ້ງຫ້ອງມູນເຊື້ອໃນໄລຍະກະກຽມຈົນຮອດປັດຈຸບັນ ເປັນຕົ້ນ: ການເກັບຂໍ້ມູນ, ຮູບພາບ, ເອກະສານຕ່າງໆ ກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວ, ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ການອອກແບບໜ້າພຽງ ຈົນເຖິງການຂໍຄວາມຮ່ວມມືກັບລູກຫຼານອະດີດການນຳ ເພື່ອຂໍຂໍ້ມູນຮູບພາບ ແລະ ວັດຖຸພັນຂອງຫ້ອງມູນເຊື້ອ ແລະ ປະຫວັດສາດ ສພຊ; ນອກນີ້, ຍັງໄດ້ມີການແລກປ່ຽນ, ຖອດຖອນບົດຮຽນແຕ່ລະບັນຫາທີ່ມີຄວາມສົນໃຈ. ຫຼັງຈາກນັ້ນ, ໄດ້ພ້ອມກັນຢ້ຽມຊົມສະຖານທີ່ຕົວຈິງແລະມອບປຶ້ມທີ່ລະນຶກຂອງສະພາແຫ່ງຊາດ ໃຫ້ຄະນະທີ່ມາແລກປ່ຽນອີກດ້ວຍ.

**(ນາງ ນິດຕາ ຄຸນປາກດີ)**

# ສສຊ ແລະ ສສຂ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ




(ສພຂ)-ວັນທີ 13-15 ພຶດສະພາ 2026, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງປາກກະດິງ ນຳໂດຍທ່ານ ສອນທະນູ ທຳມະວົງ ສສຊປະຈຳເຂດເລືອກຕັ້ງທີ11 ແຂວງບໍລິຄຳໄຊ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍທ່ານ ນາງ ຟອງສະໝຸດ ພົງວິຈິດ ສສຂ ປະຈຳເຂດເລືອກຕັ້ງເມືອງປາກກະດິງ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ V ຢູ່ 7 ບ້ານຂອງເມືອງປາກກະດິງ ຄື: ບ້ານປາກສາ, ບ້ານນ້ຳທອນ, ບ້ານນ້ຳສາງ, ບ້ານນ້ຳເຄື່ອ, ບ້ານທົ່ງນາມີ, ບ້ານຊອດ, ບ້ານສົມສະໜຸກ ແລະ ສຳນັກງານປົກຄອງເມືອງປາກກະດິງ; ມີພະນັກງານການນຳຫຼັກແຫຼ່ງ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ, ອຳນາດການປົກຄອງບ້ານ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນບ້ານເຂົ້າຮ່ວມ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ ແລະ ເປີດໂອກາດໃຫ້ປະຊາຊົນໄດ້ປະກອບຄຳເຫັນຄຳສະເໜີບັນຫາທີ່ມີຄວາມສົນໃຈ ແລະ ປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ເພື່ອຕອບສະໜອງຕາຄວາມຕ້ອງການໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຜ່ານ ສສ ໃນຖານະເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ເປັນຕົ້ນການຂໍທຶນສົມທົບສ້ອມແປງເສັ້ນທາງພາຍໃນບ້ານ, ການເສຍພາສີທີ່ດິນ, ການຊຸກຍູ້ແນວພັນເຂົ້າ ແລະ ພືດຊະນິດຕ່າງໆ ແລະ ບັນຫາອື່ນໆທີ່ຕິດພັນກັບຊີວິດການເປັນຢູ່.

ຈາກນັ້ນ, ສສຊ ແລະ ສສຂ ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຊ ຊຸດທີ X ແລະ ສພຂ ບໍລິຄຳໄຊ ຊຸດທີ V ທັງເນັ້ນໜັກສືບຕໍ່ຍຶດໝັ້ນຕໍ່ການນຳພາຂອງພັກ-ລັດ, ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງຕາມແນວທາງຂອງພັກ-ລັດ, ຮັກສາມູນເຊື້ອທີ່ຍາດມາໄດ້ໃນທ່າມກາງສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ເພີ່ມທະວີສ້າງເງື່ອນໄຂເສດຖະກິດຄອບຄົວ ປູກຝັງ, ລ້ຽງສັດ ກຸ້ມຕົນເອງ ເປັນເຈົ້າຕົນເອງ, ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດເຕົ້າໂຮມຄວາມສາມັກຄີປອງດອງເປັນປຶກແຜ່ນແໜ້ນໜາ, ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆຢ່າງເປັນເຈົ້າການໃຫ້ມີຄວາມສະຫງົບປອດໄພ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາ. ພ້ອມນັ້ນໝົດ ຍັງໄດ້ຄຳອະທິບາຍ ແລະ ຊີ້ແຈງບາງບັນຫາທີ່ປະຊາຊົນສະເໜີຈຳນວນໜຶ່ງ, ສ່ວນບັນຫາໃດທີ່ຕິດພັນກັບຫຼາຍພາກສ່ວນຈະນຳໄປຄົ້ນຄວ້າພິຈະລະນາປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຫາວິທີທາງແກ້ໄຂຮ່ວມກັນ; ພ້ອມນັ້ນ, ສສຊ-ສສຂ ໄດ້ລົງຕິດຕາມຊຸກຍູ້ການກໍ່ສ້າງ, ສ້ອມແປງເສັ້ນທາງເລກ 11 ໃຕ້ ແຕ່ບ້ານຂອນຂວ້າງ ຫາບ້ານນານ້ຳ ໄລຍະທາງ 30 ກິໂລແມັດ.

ພ້ອມນັ້ນ, ວັນທີ 13 ພຶດສະພາ ທ່ານ ໄຊຍະເພັດ ຈັນທິສອນ ສສຊ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ, ປະທານສະພາການຄ້າແລະ ອຸດສາຫະກຳແຂວງ ພ້ອມດ້ວຍຄະນະ ສສຂ ປະຈຳເມືອງທ່າພະບາດ ໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ເນື້ອໃນຂອງກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຊ ຊຸດທີ X ແລະ ສພຂ ບໍລິຄຳໄຊ ຊຸດທີ V ຢູ່ບ້ານປ່າໄລ່, ໂຮງຮຽນທະຫານ 303, ບ້ານພະບາດໂພນສັນ ແລະ ກອງບັນຊາການ ປກສ ເມືອງທ່າພະບາດ.

ເຊິ່ງປະຊາຊົນໄດ້ສະເໜີຂໍສັງກະສີເພື່ອສ້ອມແປງຫຼັງຄາໂຮງຮຽນທີ່ເປ່ເພ, ບັນຫານ້ຳຖ້ວມໃນຊ່ວງລະດູຝົນ ເຮັດໃຫ້ປະຊາຊົນບໍ່ສາມາດປູກເຂົ້າໄດ້, ການເພີ່ມຂຶ້ນຂອງລາຄາສິນຄ້າຕາມຮ້ານຄ້າແລະທ້ອງຕະຫຼາດ, ບັນຫາການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ເຊິ່ງບາງຄຳສະເໜີກໍໄດ້ອະທິບາຍ, ຊີ້ແຈງກັບທີ່ ແລະ ບາງບັນຫາຈະນຳໄປຄົ້ນຄວ້າພິຈະລະນາປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຫາວິທີແກ້ໄຂໃນຂັ້ນຕອນຕໍ່ໄປ; ພ້ອມນັ້ນ, ຍັງໄດ້ມອບທຶນສົມທົບຊ່ວຍເຫຼືອພື້ນເດີ່ນກິລາບານສົ່ງ ໃຫ້ແກ່ ປກສ ເມືອງທ່າພະບາດ ມູນຄ່າ 2 ລ້ານກວ່າກີບ.

**(ໂສລະຢ່າ)**



# ມອບ-ຮັບ ໜ້າທີ່ ປະທານສະພາປະຊາຊົນແຂວງຄຳມ່ວນ ລະຫວ່າງ ຜູ້ເກົ່າ ແລະ ຜູ້ໃໝ່




(ສພຂ) - ວັນທີ 8 ພຶດສະພາ 2026, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ມີພິທີມອບ-ຮັບ ໜ້າທີ່ ລະຫວ່າງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຊຸດທີ IV (ຜູ້ເກົ່າ) ກັບທ່ານ ໄຊຊະນະ ໂຄດພູທອນ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ຊຸດທີ V (ຜູ້ໃໝ່); ມີບັນດາທ່ານການນຳແຂວງ, ຄະນະກຳມະການປົກຄອງແຂວງ, ອົງການຈັດຕັ້ງພັກ-ລັດ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ໄດ້ຮັບຟັງການຜ່ານບົດບັນທຶກມອບ-ຮັບ ໜ້າທີ່ລະຫວ່າງປະທານສະພາປະຊາຊົນແຂວງຄຳມ່ວນ ຊຸດທີ IV ກັບ ປະທານສະພາປະຊາຊົນແຂວງ ຊຸດທີ V; ຈາກນັ້ນ, ກໍໄດ້ລົງນາມໃນບົດບັນທຶກມອບ-ຮັບໜ້າທີ່ ຂອງປະທານສະພາປະຊາຊົນຂັ້ນແຂວງ ລະຫວ່າງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຊຸດທີ IV ກັບ ທ່ານ ໄຊຊະນະ ໂຄດພູທອນ ປະທານສະພາປະຊາຊົນແຂວງ ຊຸດທີ V; ພ້ອມນັ້ນ ຍັງໄດ້ມີການລົງນາມບົດບັນທຶກການມອບ-ຮັບໜ້າທີ່ ຄະນະປະຈຳສະພາປະຊາຊົນແຂວງຜູ້ເກົ່າ ແລະ ຜູ້ໃໝ່ ລະຫວ່າງ ທ່ານ ສະເຫຼີມສັກ ແກ້ວຈັນທະລາ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ຜູ້ເກົ່າ) ກັບທ່ານ ໄພມະນີ ພົມມະສານ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງຄຳມ່ວນ (ຜູ້ໃໝ່); ທ່ານ ຄຳສຸກ ວັນທະວົງສາ ປະທານຄະນະກຳມະການ ປກຊ-ປກສ ແລະ ຍຸຕິທຳ (ຜູ້ເກົ່າ) ກັບທ່ານ ນິລະພົນ ສຸວັນນະລາດປະທານຄະນະກຳມະການ ປກຊ-ປກສ ແລະຍຸຕິທຳ ຊຸດທີ V (ຜູ້ໃໝ່); ທ່ານ ນາງສາທິດ ຈັນສີ ປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ (ຜູ້ເກົ່າ) ກັບທ່ານ ເສົານາວາ ດວງມະລາ ຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ (ຜູ້ໃໝ່).

# ສະມາຊິກສະພາ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງວິລະບູລີ



(ສພຂ)-ວັນທີ 14 ພຶດສະພາ 2026 ທ່ານ ແສນສັກ ພົມວົງສາ ແລະ ທ່ານ ໄຊບັນຍາ ພົມວິຫານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງວິລະບູລີ ໄດ້ລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ V ຢູ່ສະໂມສອນເມືອງວິລະບູລີແລະບ້ານໜອງກະແດ້ງ; ໂດຍການຕ້ອນຮັບຂອງທ່ານ ພູວະນາດ ບຸນສີພົມ ຮອງເລຂາພັກເມືອງ, ປະທານຄະນະກຳມະການປົກຄອງເມືອງ; ມີບັນດາຮອງເລຂາພັກເມືອງ, ຄະນະປະຈຳພັກເມືອງ, ອຳນາດການປົກຄອງບ້ານ; ຄູ-ອາຈານ ຕະຫຼອດຮອດພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ.

ໃນການເຄື່ອນໄຫວບັນດາທ່ານ ສສຊ, ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມປະຖົມມະລຶກ ຂອງ ສພຊ ຊຸດທີ X ແລະ ສພຂ ຊຸດທີ V; ຈາກນັ້ນ, ໄດ້ເປີດໂອກາດໃຫ້ການນຳຂອງເມືອງ, ການຈັດຕັ້ງຂັ້ນບ້ານ ກໍຄືປະຊາຊົນພາຍໃນແຕ່ລະບ້ານໄດ້ຊັກຖາມ ແລະ ມີຄຳສະເໜີຂອງປະຊາຊົນຫຼາຍບັນຫາ ເຊິ່ງເປັນບັນຫາທີ່ຕິດພັນກັບການດຳລົງຊີວິດຂອງປະຊາຊົນ, ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນບັນຫາການພັດທະນາພື້ນຖານໂຄງລ່າງ ເປັນຕົ້ນການສ້ອມແປງເສັ້ນທາງ, ນ້ຳປະປາເຂດບ້ານໂນນສົມບູນບໍ່ພຽງພໍຕໍ່ການຊົມໃຊ້ ແລະ ບັນຫາອື່ນໆ ເຊິ່ງບັນດາທ່ານ ສສຊ ແລະ ສສຂ ຍັງໄດ້ຕອບບາງບັນຫາກັບທີ່ສ່ວນມັນຫາໃດທີ່ຕິດພັນກັບຫຼາຍພາກສ່ວນໄດ້ຮັບເອົາຄຳສະເໜີຂອງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນໄປນຳສະເໜີ ຕໍ່ຂະແໜງການກ່ຽວຂ້ອງ, ເພື່ອນຳໄປປຶກສາຫາລືແລະຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ.

# ພິທີມອບ-ຮັບໜ້າທີ່ ຄະນະປະຈຳສະພາປະຊາຊົນແຂວງ




(ສພຂ) - ວັນທີ 5 ພຶດສະພາ 2026 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ໄດ້ມີການຈັດພິທີມອບ-ຮັບໜ້າທີ່ຂອງຄະນະປະຈຳສະພາປະຊາຊົນແຂວງ (ຜູ້ເກົ່າ ແລະ ຜູ້ໃໝ່); ມີທ່ານ ນາງ ດາວວອນ ໄຊສຸລຽນ ປະທານຄະນະກຳມະການປົກຄອງແຂວງ; ຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ IV, ຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ V, ຕາງໜ້າອົງການຈັດຕັ້ງພັກ-ລັດ ຂັ້ນແຂວງ, ແນວສ້າງຊາດແຂວງ, ອົງການກວດກາລັດແຂວງ, ສະຫະພັນນັກຮົບເກົ່າແຂວງ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດສອບປະຈຳພາກພາງ 2, ເລຂາພັກນະຄອນໄກສອນພົມວິຫານ; ບັນດາທ່ານເລຂາພັກເມືອງ, ປະທານຄະນະກຳມະການປົກຄອງເມືອງ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ຕະຫຼອດຮອດພະນັກງານ-ລັດຖະກອນເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ໄດ້ຮັບຟັງການປະຕິບັດໜ້າທີ່ຕະຫຼອດໄລຍະ 5 ປີຜ່ານມາ ຂອງປະທານຄະນະປະຈຳສະພາປະຊາຊົນແຂວງຜູ້ເກົ່າ; ຈາກນັ້ນ, ໄດ້ລົງນາມໃນບົດບັນທຶກມອບ-ຮັບໜ້າທີ່ຂອງປະທານຄະນະປະຈຳສະພາປະຊາຊົນແຂວງ; ພ້ອມນັ້ນ, ຍັງໄດ້ມີການເຊັນບົດບັນທຶກມອບ-ຮັບໜ້າທີ່ຂອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ; ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ; ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າລະຫວ່າງຜູ້ເກົ່າແລະຜູ້ໃໝ່.






# ສສຊ ແລະ ສສຂ ໄຊສົມບູນ ເຜີຍແຜ່ຜົນສຳເລັດກອງປະຊຸມຄົ້ງປະຖົມມະລຶກ



(ສພຂ) - ວັນທີ 11 ພຶດສະພານີ້ ທີ່ຫ້ອງປະຊຸມພູເບັ້ຍ ເບີ 502 ຂອງຫ້ອງວ່າການແຂວງ ໄດ້ມີພິທີມອບ-ຮັບ ປະທານສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່ ແລະ ປະກາດອອກພັກການ-ຮັບອຸດໜູນບຳນານ ຂອງພະນັກງານການນຳແຂວງ-ສະພາປະຊາຊົນແຂວງໄຊສົມບູນ ຊຸດທີ IV ໂດຍການເຂົ້າຮ່ວມຂອງທ່ານ ພົຈຕວ. ບົວພັນ ອິນທະປັນຍາ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງໄຊສົມບູນ; ມີຕາງໜ້າຈາກຄະນະພັກ, ຄະນະນຳຂອງແຂວງ ແລະ ບັນດາເລຂາຄະນະພັກ 5 ເມືອງ; ມີຫົວໜ້າ, ຮອງຫົວໜ້າພະແນກການ, ອົງການ ກົມກອງອ້ອມຂ້າງແຂວງແລະລັດວິສາຫະກິດ ຕະຫຼອດຮອດພະນັກງານຂອງສະພາປະຊາຊົນແຂວງແລະພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ທ່ານ ພູຄຳ ແກ້ວວົງໄຊ ຮອງເລຂາໜ່ວຍພັກ, ຮອງຄະນະຈັດຕັ້ງແຂວງ ແຂວງໄຊສົມບູນ ໄດ້ຜ່ານມະຕິຕົກລົງ ຂອງຄະນະປະຈຳພັກແຂວງ ວ່າດ້ວຍການຍົກຍ້າຍ-ຊັບຊ້ອນພະນັກງານ ໂດຍຍົກຍ້າຍ ທ່ານ ນາງ ຄຳສີ ສິດທິວໍລະດາ ກຳມະການປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງ; ທ່ານ ຄົວຈົ້ງ ດຣາເຊົ້ງ ກຳມະການພັກແຂວງ, ປະທານສະຫະພັນກຳມະບານແຂວງ ແລະ ທ່ານ ບຸນກອງ ຊົ່ງປາຢົ້ງ ກຳມະການພັກແຂວງ, ຮອງຫົວໜ້າຄະນະຈັດຕັ້ງແຂວງ ໄປຮັບໜ້າທີ່ໃໝ່ຢູ່ສະພາປະຊາຊົນແຂວງ; ຍົກຍ້າຍ ທ່ານ ຄຳເພັດ ດວງມາລາ ກຳມະການພັກແຂວງ, ຮອງປະທານກວດກາພັກ-ລັດແຂວງ ໄປຮັບໜ້າທີ່ໃໝ່ ເປັນເລຂາໜ່ວຍພັກ, ຫົວໜ້າຄະນະໂຄສະນາອົບຮົມແຂວງ.

ຈາກນັ້ນ, ທ່ານ ແດງ ປະທຸມທອງ ໄດ້ຜ່ານບົດບັນທຶກມອບ-ຮັບໜ້າທີ່ ລະຫວ່າງປະທານສະພາປະຊາຊົນແຂວງ ຊຸດທີ IV ກັບປະທານສະພາປະຊາຊົນແຂວງ ຊຸດທີ V; ຈາກນັ້ນ, ກໍໄດ້ລົງນາມເຊັນບົດບັນທຶກມອບ-ຮັບ ວຽກງານຂອງປະທານສະພາປະຊາຊົນແຂວງ ລະຫວ່າງ ທ່ານ ແດງປະທຸມທອງ ປະທານສະພາປະຊາຊົນແຂວງ (ຜູ້ເກົ່າ) ແລະ ທ່ານ ພອຍຄຳ ຮຸ່ງບຸນຍວງ ປະທານສະພາປະຊາຊົນແຂວງ (ຜູ້ໃໝ່) ຢ່າງເປັນທາງການ.

ນອກນີ້, ຍັງໄດ້ມີພິທີລົງນາມເຊັນບົດບັນທຶກມອບ-ຮັບໜ້າທີ່ ລະຫວ່າງ ທ່ານ ພັທ. ຄຳໝັ້ນ ພົມມະວົງສາ ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ (ຜູ້ເກົ່າ) ແລະ ທ່ານ ພັທ. ຟອງສະໄໝ ຊໍ່ແສງທອງ ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ ( ຜູ້ໃໝ່ ); ທ່ານ ນາງ ຄຳຫຼ້າ ທອງສີວອນ ຮອງປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ ( ຜູ້ເກົ່າ) ແລະ ທ່ານ ບີເຮີ່ ປະທານຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ ( ຜູ້ໃໝ່ ); ທ່ານ ນາງ ຂັນກາບ ໄຊຍະກຸມມານ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ຜູ້ເກົ່າ) ແລະ ທ່ານ ບຸນກອງ ຊົ່ງປາຢົ້ງ ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ (ຜູ້ໃໝ່); ທ່ານ ນາງ ຄຳສີ ສິດທິວໍລະດາ ຫົວໜ້າຄະນະໂຄສະນາອົບຮົມແຂວງ(ຜູ້ເກົ່າ) ແລະ ທ່ານ ຄຳເພັດ ດວງມາລາ ຫົວໜ້າຄະນະໂຄສະນາອົບຮົມແຂວງ(ຜູ້ໃໝ່)ມີການນຳແຂວງ ແລະ ບັນດາຜູ້ທີ່ເຂົ້າຮ່ວມ ເປັນສັຂີພິຍານໃນຄັ້ງນີ້.

ພ້ອມນັ້ນ, ຍັງໄດ້ປະກາດພະນັກງານການນຳແຂວງອອກພັກການ-ຮັບອຸດໜູນບຳນານ ຄື: ທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດ ຊຸດທີ IX, ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ທ່ານ ຄຳພູທອນ ວົງພະຈັນ ກຳມະການພັກແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງອະນຸວົງ, ຮອງປະທານສະພາປະຊາຊົນແຂວງ; ທ່ານ ພັອ. ວິໄຊທໍ່ ເພຍຫຼວງຈົ່ງເສີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ນາງ ຂັນກາບ ໄຊຍະກຸມມານ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຊຸດທີ IV.

**(ອຳໄພພອນ ແກ້ວວິໄລ)**




## ຮອງປະທານ...

(ຕໍ່ຈາກໜ້າ 1)

ເພາະພາສາອັງກິດ, ຄວາມຮູ້ກ່ຽວກັບການນຳໃຊ້ປັນຍາປະດິດ (AI); ຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດສັນຍາ, ສົນທິສັນຍາຕ່າງໆ ທີ່ສອງຝ່າຍໄດ້ລົງນາມຮ່ວມກັນ ໃຫ້ມີຜົນສຳເລັດເປັນຢ່າງດີ.

ທ່ານເອກອັກຄະລັດຖະທູດ ໄດ້ກ່າວສະແດງຄວາມຂອບໃຈເປັນຢ່າງຍິ່ງຕໍ່ການຕ້ອນຮັບຢ່າງອົບອຸ່ນຂອງທ່ານຮອງປະທານສະພາແຫ່ງຊາດ ພ້ອມທັງອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ແລະ ການເປັນຄູ່ຮ່ວມມືຮອບດ້ານ ລະຫວ່າງອິດສະຕຣາລີ ແລະ ສປປລາວ ນັບມື້ນັບໄດ້ຮັບຜົນສຳເລັດຍິ່ງໆຂຶ້ນ.

ການພົວພັນຮ່ວມມືລະຫວ່າງສອງປະເທດລາວ ແລະ ອົດສະຕຣາລີ ຕະຫຼອດໄລຍະ 7 ທົດສະວັດຜ່ານມາ (15/01/1952 - ປັດຈຸບັນ) ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ເຫັນໄດ້ວ່າມີການຂະຫຍາຍຕົວໄປສູ່ທ່າກ້າວອັນດີ; ພິເສດ, ສອງຝ່າຍໄດ້ຍົກລະດັບການພົວພັນຮ່ວມຂຶ້ນເປັນຄູ່ຮ່ວມມືຮອບດ້ານ ໃນປີ 2024 ເຊິ່ງເນັ້ນໃສ່ຄວາມໝັ້ນຄົງ, ເສດຖະກິດແລະການພັດທະນາຊັບພະຍາກອນມະນຸດທີ່ຍືນຍົງ.

**(ກົງທະນຸຄຳ ພົມພັດເສລີ)**



## ຍົກສູງ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມເຝິກອົບຮົມໃຫ້ແກ່ສະມາຊິກສະພາເພດຍິງ ເພື່ອຍົກສູງຂີດຄວາມສາມາດໃນການປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມ ໄດ້ຈັດຂຶ້ນໃນວັນທີ 14-15 ພຶດສະພານີ້ ທີ່ເມືອງວັງວຽງ, ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການສູນກາງພັກ, ກຳມະການຄະນະປະຈຳ, ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ, ປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ ເຊິ່ງມີບັນດາທ່ານສະມາຊິກສະພາແຫ່ງຊາດ(ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ທີ່ເປັນເພດຍິງຈາກແຂວງຫຼວງພະບາງ ແລະ ແຂວງຄຳມ່ວນ,ບັນດາທ່ານຫົວໜ້າກົມ ແລະ ຮອງຫົວໜ້າກົມ ທີ່ເປັນເພດຍິງພາຍໃນສະພາແຫ່ງຊາດ ລວມຜູ້ເຂົ້າຮ່ວມທັງໝົດ 75 ທ່ານ, ເພດຊາຍ 9 ທ່ານ; ກອງປະຊຸມໄດ້ຮັບກຽດຕ້ອນຮັບ ແລະ ຮັບຟັງການໂອ້ລົມຂອງທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ທີ່ໃຫ້ທິດຊີ້ນຳຕໍ່ການເຄື່ອນໄຫວວຽກງານຂອງຄະນະສສຊ ເພດຍິງ ຊຸດທີ X ໄລຍະປີ 2026-2030 ກໍຄືການເຝິກຝົນຫຼໍ່ຫຼອມເພື່ອພັດທະນາຕົນເອງຂອງສະມາຊິກສະພາເພດຍິງ ໃຫ້ມີຄວາມຮູ້ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ຄວາມຮັບຜິດຊອບການເມືອງທີ່ໄດ້ຮັບມອບໝາຍ ເພື່ອໃຫ້ສົມກັບເປັນຕົວແທນແຫ່ງສິດແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ.

ຜູ້ແທນກອງປະຊຸມໄດ້ຮັບຟັງການບັນລະຍາຍເອກະສານກ່ຽວກັບການພິຈາລະນາຮັບຮອງ,ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ການສ້າງແຜນງົບປະມານທີ່ຄຳນຶງເຖິງບົດບາດຍິງ-ຊາຍ,ການສ້າງເຄືອຂ່າຍປະສານວຽກງານຂອງແມ່ຍິງ;ນອກຈາກນີ້, ຍັງໄດ້ແລກປ່ຽນບົດຮຽນເຊິ່ງກັນແລະກັນ ລະຫວ່າງ ສສຊ, ສສຂ ແລະ ວິທະຍາກອນຢ່າງກົງໄປກົງມາ ດ້ວຍບັນຍາກາດຟົດຟື້ນ ເຮັດໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ກຽມໄວ້ຢ່າງຈົບງາມ.

ນອກຈາກເປັນການເຝິກອົບຮົມໃນຫົວຂໍ້ຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ, ກອງປະຊຸມຄັ້ງນີ້ ຍັງໄດ້ເຜີຍແຜ່ນິຕິກຳສອງສະບັບທີ່ສຳຄັນ ເພື່ອຮັບໃຊ້ໜ້າທີ່ການເມືອງຂອງຄະນະສສຊ ເພດຍິງ ຄື: 1. ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ X ສະບັບເລກທີ 127/ຄປຈ, ລົງວັນທີ 14 ພຶດສະພາ 2026; 2. ມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ X ສະບັບເລກທີ 128/ຄປຈ, ລົງວັນທີ 14 ພຶດສະພາ 2026 ໂດຍແມ່ນທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ຮັບການແຕ່ງຕັ້ງໃຫ້ສືບຕໍ່ເປັນປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ, ມີບັນດາທ່ານຮອງປະທານ 4 ທ່ານ ຄື: 1. ທ່ານ ນາງ ພັນຈິນດາ ເລັ່ງສະຫວັດ, 2. ທ່ານ ນາງ ດາລານີ ພົມມະວົງສາ, 3. ທ່ານ ນາງ ເພັດສະໝອນ ສອນ, 4. ທ່ານ ພອ. ນາງ ພວງທອງ ສຸຍະວົງ ແລະ ກຳມະການ ຈຳນວນ 46 ທ່ານ ແລະ ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ຮັບການແຕ່ງຕັ້ງເປັນຜູ້ຊີ້ນຳລວມວຽກງານຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ.

ກອງປະຊຸມໄດ້ຮຽກຮ້ອງໃຫ້ບັນດາທ່ານສະມາຊິກສະພາເພດຍິງທີ່ເຂົ້າຮ່ວມໃນຄັ້ງນີ້ ຈົ່ງນຳເອົາບົດຮຽນຈາກການເຝິກອົບຮົມໄປໝູນໃຊ້ເຂົ້າໃນການພິຈາລະນາຮັບຮອງ ກໍຄືການຄົ້ນຄວ້າ, ປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄືການພັດທະນາເສດຖະກິດ-ສັງຄົມຢູ່ຂັ້ນທ້ອງຖິ່ນ ໃຫ້ໄດ້ຮັບຜົນດີຂຶ້ນກວ່າເກົ່າ; ພ້ອມທັງຮຽກຮ້ອງໃຫ້ເປັນເຈົ້າການນຳພາ ແລະ ຈັດຕັ້ງຜັນຂະຫຍາຍມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ X ໃຫ້ປາກົດຜົນເປັນຈິງ ໂດຍປະສານສົມທົບແໜ້ນກັບການປະຕິບັດພາລະບົດບາດດ້ານນິຕິບັນຍັດ, ດ້ານຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດແລະການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອຍົກສູງບົດບາດຂອງຕົນທີ່ເປັນສະມາຊິກສະພາເພດຍິງ ໃຫ້ພົ້ນເດັ່ນຂຶ້ນຢູ່ພາຍໃນ ແລະ ສາກົນ.

## ອາດ ກະວີລາວ

# ເຂົາຮັກ ຂ້ອຍຊັງ

**# ຄົມສິລປ໌**

❊ ເຖິງໃຜເຊັງຊ່າກ້ອງ
ຂ້ອຍນີ້ ຂໍຂືນຂັດ
ຄົນອື່ນເຟືອງແຝງໃກ້
ຂ້ອຍຂໍຫຼີບຫຼີກໜ້າ

ກໍຕາມແຕ່ສຸດວິໄສ
ບໍ່ຫ່ອນຍິນດີດ້ວຍ
ສະເໜຫາຮັກຮົ່ງ
ບໍ່ຈາເວົ້າຮ່ວມວົງ ນຳນາ

❊ ຄົນອື່ນຫອມຮັກເຈົ້າ
ຂ້ອຍນີ້ຊີງຊັງຄັກ
ເຂົາບູຊາຊູຊ້ອງ
ຂ້ອຍຂີ້ດຽດຂະໜາດແທ້

ໃຈຈໍ່ຈຳສະຫຼັກ
ໜ່າຍແໜງໜັງໜ້າ
ສະຫຼອງຍໍຍົກກຽດ
ບໍ່ແລຊໍ້າສ່ອງຕາ

❊ ເຂົາຍໍຂັນດອກໄມ້
ຂ້ອຍເຜົາເກືອແກມພິກ
ເຂົາອວຍພອນແພງໃຫ້
ຂ້ອຍກວດຂັນຢາດນໍ້າ

ມາໄລຊໍ່ຊູຖວາຍ
ສາບຊັງບໍ່ເຊົາແຄ້ນ
ປະສົບໃນໄຊຍະໂຊກ
ອຸທິດໃຊ້ສິ່ງເວນ

❊ ເຂົາວ່າແກ້ວຄ່າລ້ານ
ຂ້ອຍວ່າປຸນປານຕົມ
ເຂົາວ່າແນວນາມໄມ້
ຂ້ອຍນີ້ວ່າ ເຮັດຂັ້ນໄດຕໍ່າໃຕ້

ມະນີໂຊດໃສແສງ
ຫຼົ່ມສະອາງອົມເປື້ອນ
ສະຫຼັກລາຍພຸດທະຮູບ
ເອົາຕີນຢໍ້າຢຽບໃຫ້ຈົ່ມ

❊ ສິ່ງຊິງຊັງບໍ່ແມ່ນຊູ້
ຮຽນວ່າພາຍໂພງຜີ
ດ່າໃຫ້ມານມອນຮ້າຍ
ຢ່າຫວງໂທດແກ່ຂ້າ ບໍ່ກິນປູນຢ່າຮົ່ມຮ້ອນ

ຫລືແຟນເກົ່າປະການໃດ ດອກນາ!
ທີ່ກອບໂກຍກິນບ້ານ
ອັນຕະລາຍທົມະໂທດ
ຢ່າຮົບຂ້ອນຂອດພຸງ ໃດເດີ!

## ສັບສາຍ ລະບາຍ



*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ໂກ້**ຊິຮອດວັນທີ **1 ມິຖຸນາ** ເຫັນຂ່າວວ່າມີຫຼາຍແຂວງກຽມພ້ອມໃນການປູກຕົ້ນໄມ້ ເພື່ອຄືນຄວາມສົມດຸນໃຫ້ແກ່ທຳມະຊາດ ເພິ່ນປະກາດວ່າໃນປີນີ້ ໃຫ້ປູກໄມ້ຢ່າງມີຈຸດສຸມ ແລະ ເປົ້າໝາຍຍາວນານ ພ້ອມທັງເຂດທີ່ອາດຈະເກີດໄພ ທຳມະຊາດຊື່ນໃນຕໍ່ໜ້າ **ເຊີນເດີ!** ເຊີນຊ່ວຍກັນປູກສ້າງ ພິທັກສາພືດນານາພັນ ແຕ່ຢ່າໄລເລີຍປະຫ່ຽວຕາຍໄປລ້າ **ປີ້ນີ້!** ຍິນວ່າຕາມສຳນັກງານອົງການເບື້ອງບຸກໜັກເອົາໃຈໃສ່ ປູກຕົ້ນໄມ້ປະດັບ ລ່າງາມຕາເຕີຍ ແຕ່ມີພໍ້ຮົ່ມເຢັນ **ບໍ່ນໍ!**

❊ **ຄົບຮອບ 68 ປີ ວັນແຫກຄຸກ**ຢ່າງມະຫັດສະຈັນຂອງບັນດາທ່ານຜູ້ນຳ ແລະ ແນວລາວຮັກຊາດ ບັດນີ້ປະຫວັດສາດຜ່ານພົ້ນ ຜົນງານໃຫຍ່ມີມາ ປອງປະຊາຈາລຶກຄຳຄຸນຄອນຄ່າ ຫຼານຂໍນຳຜົນງານອ້າງ ໃຫ້ປອງປະຊາໄດ້ຈົ່ງຈື່ **24 ພຶດສະພາ**ແມ່ນມື້ ທ່ານລົບລີ້ຫຼີກໄພ **ບໍ່ນໍ!** ລາວເຮົາຈຶ່ງໄດ້ ເອກະລາດມານີ້ ຂໍຖືເອົາເອທີ ກະວີສາດສານສ້ອຍ ລະລຶກຄືນທອນຮູ້ ບຸນຄຸນທ່ານຈຳຈື່ ຖືເອົາແນວທາງທ່ານສ່ອງຊີ້ ນຳພາຊາດຈະເລີນກ້າວດັ່ງປະສົງ **ຂອບແລ້ວ!**

## ຊອບຍິ້ມ

**# ພົ້ງລຶ່ງ**

### ເລື່ອງ: ຄິດວ່າເອົາມາຄືນ

ທິດແສດ ຈົບມຸມ ຫຼັງຈາກທີ່ຖືກໄລ່ລ່າຢ່າງໜັກຈາກຕຳຫຼວດ

**ຕຳຫຼວດ:** ເປັນຫຍັງເຈົ້າຄືຂັບລົດໄວພິລຶກແທ້, ເຈົ້າເຮັດຫຍັງຜິດມາບໍ່ນີ້?

**ທິດແສດ:** ອາທິດກ່ອນ ເມຍຂ້ອຍໜີໄປກັບຕຳຫຼວດ, ພໍແຕ່ເຫັນລົດຕຳຫຼວດ ຂ້ອຍກໍຕົກໃຈ, ຄິດວ່າຊິເອົາເມຍມາສົ່ງຄືນ ຂ້ອຍກະເລີຍຮີບໜີ

**ຕຳຫຼວດ:** !!!



## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

“ຄົບໝົດບ້ານ ກິນນ້ຳສ້າງດຽວ
ທຽວທາງດຽວ ບໍ່ຢຽບຮອຍກັນ”

ລັດຖະສະພາຕ່າງປະເທດ

# ການນຳສະພານິຕິບັນຍັດ ຮຽກຮ້ອງ ໃຫ້ມີສ່ວນຮ່ວມພັດທະນາປະເທດຈີນ ໃຫ້ທັນສະໄໝ ແລະ ບັງຄັບໃຊ້ປະມວນ ກົດໝາຍສິ່ງແວດລ້ອມຢ່າງເຕັມທີ່

(Xinhua) - ຈ້າວ ເລີ້ຈີ້ ກຳມະການປະຈຳກົມການເມືອງສູນກາງພັກກອມມູນິດຈີນ, ປະທານຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຮຽກຮ້ອງໃຫ້ອົງການນິຕິບັນຍັດ ມີບົດບາດຢ່າງຕັ້ງໜ້າໃນການຊຸກຍູ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ XV (2026-2030) ແລະ ການພັດທະນາປະເທດຈີນໃຫ້ທັນສະໄໝ ເຊິ່ງໄດ້ກ່າວຄຳເຫັນດັ່ງກ່າວໃນລະຫວ່າງການທັດສະນະສຶກສາຢູ່ແຂວງກຸ້ຍໂຈວ (Guizhou) ທາງພາກຕາເວັນຕົກສຽງໃຕ້ຂອງຈີນ ຕັ້ງແຕ່ວັນທີ 13-15 ພຶດສະພານີ້.

ລະຫວ່າງການທັດສະນະສຶກສາ, ຈ້າວ ໄດ້ຢ້ຽມຢາມຫ້ອງການຂອງສະມາຊິກສະພານິຕິບັນຍັດ, ວິສາຫະກິດ ແລະ ເຂດຊົນນະບົດ, ເຂົ້າຮ່ວມການສົນທະນາກັບສະມາຊິກສະພານິຕິບັນຍັດ ແລະ ປະຊາຊົນໃນທ້ອງຖິ່ນ ເພື່ອຂໍຄຳແນະນຳກ່ຽວກັບການປັບປຸງວຽກງານຂອງສະພາຜູ້ແທນປະຊາຊົນ; ນອກຈາກນີ້, ຍັງຢ້ຽມຢາມສະພານິຕິບັນຍັດລະດັບເມືອງ ແລະ ແຂວງ ເພື່ອຮຽນຮູ້ກ່ຽວກັບວຽກງານຕ່າງໆ, ລວມທັງການເລືອກຕັ້ງສະພາຜູ້ແທນປະຊາຊົນຂັ້ນເມືອງ ແລະ ຂັ້ນຕາແສງ ແລະ ການກວດສອບງົບປະມານ.

ເຂົາຮຽກຮ້ອງໃຫ້ມີການປັບປຸງຂອບກົດໝາຍສຳລັບນະວັດຕະກຳວິທະຍາສາດ ແລະ ເຕັກໂນໂລຊີ, ການສະໜັບສະໜູນດ້ານອຸດສາຫະກຳ, ການຄັງ ແລະ ການເກັບພາສີ, ບໍລິການທາງການເງິນ, ແລະ ການຫັນປ່ຽນໄປສູ່ເສດຖະກິດກາກບອນຕ່ຳ ເພື່ອສະໜັບສະໜູນການພັດທະນາທີ່ມີຄຸນນະພາບສູງ; ຈ້າວ ເນັ້ນໜັກຕື່ມອີກວ່າ ສະມາຊິກສະພານິຕິບັນຍັດ ຄວນຮັກສາສາຍພົວພັນທີ່ໃກ້ຊິດກັບປະຊາຊົນແລະປະຕິບັດຕາມຫຼັກການປະຊາທິປະໄຕປະຊາຊົນຢ່າງຊື່ສັດໃນທຸກຂະບວນການ.

ສະມາຊິກສະພານິຕິບັນຍັດອາວຸໂສ ຮຽກຮ້ອງໃຫ້ມີຄວາມພະຍາຍາມຫຼາຍຂຶ້ນເພື່ອເສີມສ້າງການປົກປ້ອງສິ່ງແວດລ້ອມແລະການອະນຸລັກຊັບພະຍາກອນ ແລະ ຮັບປະກັນການຈັດຕັ້ງປະຕິບັດປະມວນກົດໝາຍນິເວດວິທະຍາ ແລະ ສິ່ງແວດລ້ອມ ສະບັບໃໝ່ ຢ່າງມີປະສິດທິພາບ; ຄຳເຫັນດັ່ງກ່າວຖືກຍົກຂຶ້ນລະຫວ່າງກອງປະຊຸມເຝິກອົບຮົມ 2 ວັນ ທີ່ຈັດໂດຍກຳມາທິການປົກປ້ອງສິ່ງແວດລ້ອມແລະການອະນຸລັກຊັບພະຍາກອນ ຂອງ NPC ເຊິ່ງສິ້ນສຸດລົງໃນວັນພະຫັດທີ 14 ພຶດສະພາ ທີ່ເມືອງຊີອານ (Xi'an) ແຂວງຊານຊີ (Shaanxi) ທາງພາກຕາເວັນຕົກສຽງເໜືອຂອງຈີນ ໂດຍມີ ຫວັງ ຕົງໝິງ (Wang Dongming) ແລະ ຕິງ ຈົງຫຼີ (Ding Zhongli) ຮອງປະທານຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນທັງສອງ ເຂົ້າຮ່ວມ.

ຫວັງ ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຈັດຕັ້ງປະຕິບັດປະມວນກົດໝາຍນິເວດວິທະຍາ ແລະ ສິ່ງແວດລ້ອມ ແລະ ຮຽກຮ້ອງໃຫ້ສະມາຊິກສະພານິຕິບັນຍັດ ຮັບປະກັນການບັງຄັບໃຊ້ຢ່າງມີປະສິດທິພາບ, ປ່ຽນຜົນສຳເລັດທາງກົດໝາຍທີ່ສຳຄັນນີ້ ໃຫ້ກາຍເປັນຄວາມກ້າວໜ້າທີ່ແທ້ຈິງໃນການສ້າງປະເທດຈີນທີ່ສວຍງາມ.

ຕິງ ໄດ້ເນັ້ນໜັກເຖິງຄວາມຈຳເປັນໃນການປັບປຸງລະບົບການອະນຸລັກແລະການຄຸ້ມຄອງດ້ານນິເວດວິທະຍາ ໃຫ້ເໝາະສົມກັບສະພາບທ້ອງຖິ່ນ ແລະ ເພື່ອເສີມຂະຫຍາຍຄວາມສາມາດແລະປະສິດທິພາບຂອງການປົກປ້ອງ ແລະ ການຄຸ້ມຄອງດ້ານສິ່ງແວດລ້ອມ.

ປະມວນກົດໝາຍນິເວດວິທະຍາ ແລະ ສິ່ງແວດລ້ອມ ເຊິ່ງເປັນປະມວນກົດໝາຍສະບັບທີສອງຂອງຈີນຢ່າງເປັນທາງການ ຕໍ່ຈາກປະມວນກົດໝາຍແພ່ງທີ່ປະກາດໃຊ້ໃນປີ 2020 ໄດ້ຮັບການອະນຸມັດຈາກສະພານິຕິບັນຍັດໃນເດືອນມີນານີ້ໂດຍມີຈຸດປະສົງເພື່ອປົກປ້ອງການຢູ່ຮ່ວມກັນຢ່າງກົມກຽວລະຫວ່າງມະນຸດຊາດ ແລະ ທຳມະຊາດໃນປະເທດ ເຊິ່ງມີກຳນົດຈະມີຜົນບັງຄັບໃຊ້ໃນວັນທີ 15 ສິງຫາ 2026.




# ລັດຖະສະພາ Israel ຜ່ານຮ່າງກົດໝາຍຍຸບສະພາ



(Xinhua) - ວັນພຸດທີ 20 ພຶດສະພານີ້, ສະມາຊິກສະພາອິດສະຣາແອນ ໃຫ້ການອະນຸມັດເບື້ອງຕົ້ນຕໍ່ຮ່າງກົດໝາຍຍຸບສະພາ ເຊິ່ງອາດເຮັດໃຫ້ການເລືອກຕັ້ງຄັ້ງຕໍ່ໄປ ເກີດຂຶ້ນໄວກວ່າກຳນົດໄວ້ຫຼາຍອາທິດ; ຮ່າງກົດໝາຍສະບັບນີ້ ເຊິ່ງຍັງຕ້ອງຜ່ານການອ່ານເຕັມຮູບແບບອີກ 3 ຄັ້ງຜ່ານການລົງຄະແນນສຽງເຫັນດີ 110 ສຽງ ຈາກທັງໝົດ 120 ທີ່ນັ່ງໃນລັດຖະສະພາ ໂດຍບໍ່ມີສຽງຄັດຄ້ານ.

ຜົນສຳຫຼວດຄວາມຄິດເຫັນຫຼ້າສຸດຄາດຄະເນວ່າ ນາຍົກລັດຖະມົນຕີເບັນຈາມິນ ເນທັນຢາຮູ ຈະພ່າຍແພ້ການເລືອກຕັ້ງ, ຜົນສຳຫຼວດສະແດງໃຫ້ເຫັນວ່າພັກລັດຖະບານປະສົມຝ່າຍຂວາຂອງເຂົາ ຈະໄດ້ຮັບປະມານ 52 ທີ່ນັ່ງ ເຊິ່ງໜ້ອຍກວ່າສຽງສ່ວນຫຼາຍທີ່ຈຳເປັນເພື່ອສ້າງຕັ້ງລັດຖະບານຊຸດຕໍ່ໄປເຖິງ 9 ທີ່ນັ່ງ.

ຍັງບໍ່ມີການກຳນົດວັນເລືອກຕັ້ງທີ່ແນ່ນອນເທື່ອ. ອິດສະຣາແອນ ຄວນຈະຈັດການເລືອກຕັ້ງລະດັບຊາດທຸກໆ 4 ປີ, ແຕ່ກໍ່ມີການເລືອກຕັ້ງກ່ອນກຳນົດເກີດຂຶ້ນເລື້ອຍໆ; ການເລືອກຕັ້ງລະດັບຊາດຄັ້ງຫຼ້າສຸດແມ່ນວັນທີ 1 ພະຈິກ 2022 ແລະ ການເລືອກຕັ້ງຄັ້ງຕໍ່ໄປ ຈະຈັດຂຶ້ນຢ່າງຊ້າທີ່ສຸດໃນວັນທີ 27 ຕຸລານີ້.

# ສະພາສູງ Pakistan ຜ່ານມະຕິຢືນຢັນມິດຕະພາບກັບຈີນ ໃນວັນຄົບຮອບ 75 ປີ ແຫ່ງສາຍພົວພັນ



(Xinhua) - ວັນພຸດທີ 20 ພຶດສະພານີ້, ສະພາສູງປາກິດສະຖານ ໄດ້ຜ່ານມະຕິເປັນເອກະສັນ ເພື່ອຢືນຢັນມິດຕະພາບ ປາກິດສະຖານ-ຈີນ ເນື່ອງໃນໂອກາດວັນຄົບຮອບ 75 ປີ ແຫ່ງສາຍພົວພັນທາງການທູດລະຫວ່າງສອງປະເທດ; ມະຕິດັ່ງກ່າວ ສະເໜີໂດຍ ໂມຮຳມັດ ອີຊາກ ດາຣ໌ (Mohammad Ishaq Dar) ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງການຕ່າງປະເທດ ເຊິ່ງໄດ້ອະທິບາຍເຖິງສາຍພົວພັນ ປາກິດສະຖານ-ຈີນ ວ່າເປັນແບບຢ່າງຂອງຄວາມໄວ້ວາງໃຈ, ຄວາມເຄົາລົບ ແລະ ຄວາມປາຖະໜາຮ່ວມກັນ.

ເຂົາກ່າວວ່າ ສາຍພົວພັນສອງຝ່າຍໄດ້ເຂັ້ມແຂງຂຶ້ນຢ່າງຕໍ່ເນື່ອງຕະຫຼອດ 75 ປີທີ່ຜ່ານມາ ແລະ ຍັງຄົງເປັນພື້ນຖານສຳຄັນຂອງສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາໃນພາກພື້ນ; ດາຣ໌ ຢືນຢັນຄຳໝັ້ນສັນຍາຂອງປາກິດສະຖານ ທີ່ຈະຂະຫຍາຍການຮ່ວມມືກັບຈີນໃນດ້ານການເມືອງ, ເສດຖະກິດ, ຍຸດທະສາດ ແລະ ການພົວພັນລະຫວ່າງປະຊາຊົນ ພ້ອມທັງເນັ້ນໜັກເຖິງຄວາມຕັ້ງໃຈຮ່ວມກັນຂອງທັງສອງປະເທດ ທີ່ຈະສືບຕໍ່ມິດຕະພາບອັນເຂັ້ມແຂງນີ້ເພື່ອຄົນຮຸ່ນຫຼັງ.

ປາກິດສະຖານ ແລະ ຈີນ ສ້າງຕັ້ງສາຍພົວພັນທາງການທູດໃນປີ 1951, ແລະ ການຮ່ວມມືຂອງທັງສອງປະເທດ ໄດ້ຂະຫຍາຍໄປສູ່ຫຼາຍຂະແໜງການນັບຕັ້ງແຕ່ນັ້ນມາ ລວມທັງການຄ້າ, ພື້ນຖານໂຄງລ່າງ, ການປ້ອງກັນປະເທດແລະການແລກປ່ຽນວັດທະນະທຳ.

# ປະທານລັດຖະສະພາ ຖືກແຕ່ງຕັ້ງເປັນ ຕົວແທນພິເສດຂອງອີຣານດ້ານກິດຈະການຈີນ



(Xinhua) - ສຳນັກຂ່າວເຄິ່ງທາງການ Fars ທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານອີຣານ ລາຍງານເມື່ອວັນອາທິດທີ 17 ພຶດສະພານີ້ ວ່າ ໂມຮຳມັດ ບາເກີ ກາລີບາຟ (Mohammad Bagher Ghalibaf) ປະທານລັດຖະສະພາອີຣານ ໄດ້ຮັບການແຕ່ງຕັ້ງເປັນຕົວແທນພິເສດຂອງປະເທດດ້ານກິດຈະການຈີນ.

ຕຳແໜ່ງນີ້ເຄີຍດຳລົງໂດຍ ອັບດຸລເຣຊາ ຣາມານີ ຟາຊລີ (Abdolreza Rahmani Fazli) ເອກອັກຄະລັດຖະທູດອີຣານປະຈຳ ສປຈີນ ຄົນປັດຈຸບັນ ແລະ ອາລີ ລາຣິຈານີ (Ali Larijani) ອະດີດເລຂາທິການສະພາຄວາມໝັ້ນຄົງແຫ່ງຊາດສູງສຸດຂອງອີຣານ, ຜູ້ທີ່ຖືກຂ້າຕາຍໃນການໂຈມຕີຂອງສະຫະລັດອາເມລິກາ ແລະ ອິດສະຣາແອນ ໃນເດືອນມີນາຜ່ານມາ.

ກາລີບາຟ ເປັນຫົວໜ້າຜູ້ເຈລະຈາຂອງອີຣານໃນການເຈລະຈາສັນຕິພາບກັບສະຫະລັດ ຫຼັງຈາກການຢຸດຍິງເມື່ອວັນທີ 8 ເມສາ ລະຫວ່າງເຕຣານ ແລະ ວໍຊິງຕັນ ຫຼັງຈາກການສູ້ຮົບເປັນເວລາ 40 ວັນ.

# ນາຍົກໄທ ນຳພາການຊຸກຍູ້ຂຽນລັດຖະທຳມະນູນ ຄືນໃໝ່, ສະເໜີຕັ້ງສະພາຮ່າງລັດຖະທຳມະນູນ




(Xinhua) - ອະນຸທິນ ຊານວິຣະກຸນ ນາຍົກລັດຖະມົນຕີໄທ ນຳພັກພູມໃຈໄທຍື່ນຮ່າງປັບປຸງລັດຖະທຳມະນູນຕໍ່ລັດຖະສະພາ ໃນວັນພຸດທີ 20 ພຶດສະພາ, ເຊິ່ງເປັນພັກທຳອິດທີ່ລິເລີ່ມຂະບວນການປັບປຸງລັດຖະທຳມະນູນຢ່າງເປັນທາງການ; ອະນຸທິນ ພ້ອມກັບຄະນະກຳມະການບໍລິຫານພັກ ແລະ ສະມາຊິກສະພາຜູ້ແທນລາດສະດອນຂອງພັກ ໄດ້ຍື່ນຂໍ້ສະເໜີຕໍ່ປະທານສະພາຜູ້ແທນລາດສະດອນ ໂສພົນ ຊາຣຳ ໂດຍກຳນົດຂັ້ນຕອນການຮ່າງສິ່ງທີ່ພັກເອີ້ນວ່າ "ລັດຖະທຳມະນູນຂອງປະຊາຊົນ".

ຂໍ້ສະເໜີດັ່ງກ່າວ ຮຽກຮ້ອງໃຫ້ມີສະພາຮ່າງລັດຖະທຳມະນູນ (Constitution Drafting Assembly) ທີ່ມີສະມາຊິກ 100 ຄົນ, ປະກອບດ້ວຍຜູ້ແທນແຂວງ 77 ຄົນ (ແຂວງລະຄົນ) ແລະ ຜູ້ຊ່ຽວຊານ ແລະ ນັກວິຊາການ 23 ຄົນ ໂດຍມີສະມາຊິກສຳຮອງອີກ 300 ຄົນ, ລວມເປັນລາຍຊື່ຜູ້ສະໝັກຮັບເລືອກຕັ້ງທັງໝົດ 400 ຄົນ.

ໃນຖະແຫຼງການ, ພັກລະບຸວ່າ ສະມາຊິກຈະບໍ່ໄດ້ຮັບການເລືອກຕັ້ງໂດຍກົງ, ສອດຄ່ອງກັບຄຳຕັດສິນຂອງສານລັດຖະທຳມະນູນ; ແທນທີ່ຈະເປັນເຊັ່ນນັ້ນ, ສະມາຊິກລັດຖະສະພາຈາກທັງສອງສະພາ ຈະເລືອກສະມາຊິກຈາກ ລາຍຊື່ຜູ້ສະໝັກ, ໂດຍມີການຈັດສັນໂກຕາໃຫ້ສະພາສູງ (ທີ່ມີ 200 ທີ່ນັ່ງ) ແລະ ສະພາຜູ້ແທນລາດສະດອນ (ທີ່ມີ 500 ທີ່ນັ່ງ).

ຮ່າງຂອງພັກພູມໃຈໄທ ໄດ້ຫ້າມຢ່າງຈະແຈ້ງບໍ່ໃຫ້ມີການປ່ຽນແປງພາກທີ 1 ວ່າດ້ວຍບົດບັນຍັດທົ່ວໄປ ແລະ ພາກທີ 2 ວ່າດ້ວຍສະຖາບັນພະມະຫາກະສັດ ຫຼື ລາຊະວົງ (monarchy).

ເພື່ອແກ້ໄຂອຸປະສັກສຳຄັນທີ່ຂັດຂວາງຄວາມພະຍາຍາມປັບປຸງລັດຖະທຳມະນູນກ່ອນໜ້ານີ້, ພັກພູມໃຈໄທ ຈຶ່ງສະເໜີໃຫ້ຫຼຸດເກນການອະນຸມັດຂອງສະພາສູງ ຈາກໜຶ່ງສ່ວນສາມເປັນໜຶ່ງສ່ວນສີ່ ຫຼື ປະມານ 50 ຈາກ 200 ທີ່ນັ່ງ, ໂດຍເອີ້ນວ່າເປັນການປະນີປະນອມ.

"ວັນນີ້, ພວກເຮົາໄດ້ສະແດງຈຸດຢືນໃຫ້ເຫັນຢ່າງຊັດເຈນແລ້ວວ່າ ພັກພູມໃຈໄທຮັບຟັງສຽງປະຊາຊົນ ແລະ ພ້ອມທີ່ຈະເດີນໜ້າປະຕິຮູບລັດຖະທຳມະນູນຜ່ານຂະບວນການປະຊາທິປະໄຕ" ອະນຸທິນ ກ່າວຫຼັງຈາກການຍື່ນຮ່າງ.

ໂສພົນ ກ່າວວ່າຮ່າງດັ່ງກ່າວ ຈະຖືກລວມເຂົ້າໃນວາລະກອງປະຊຸມລັດຖະສະພາໃນເວລາທີ່ເໝາະສົມ ແລະ ພັກການເມືອງອື່ນໆ ຍັງຄົງມີອິດສະຫຼະໃນການຍື່ນຮ່າງທີ່ແຂ່ງຂັນກັນໄດ້.

ຄວາມພະຍາຍາມນີ້ເກີດຂຶ້ນຫຼັງຈາກການລົງປະຊາມະຕິເມື່ອວັນທີ 8 ກຸມພາ 2026 ເຊິ່ງຜູ້ມີສິດເລືອກຕັ້ງໄດ້ສະແດງການສະໜັບສະໜູນການປະຕິຮູບລັດຖະທຳມະນູນ.

# ລັດຖະສະພາ ແລະ ສະພາຂອງ EU ບັນລຸການ ປະນີປະນອມການປະຕິບັດຂໍ້ຕົກລົງການຄ້າ EU-US



(Xinhua) - ວັນພຸດທີ 20 ພຶດສະພານີ້ ທີ່ເມືອງສະຕຣາສບູກ (Strasbourg) ປະເທດຝຣັ່ງ, ຜູ້ແທນຈາກລັດຖະສະພາເອີຣົບ (European Parliament - EP) ແລະ ສະພາຂອງສະຫະພາບເອີຣົບ (Council of the EU) ບັນລຸການຕົກລົງປະນີປະນອມກ່ຽວກັບຮ່າງກົດໝາຍເພື່ອປະຕິບັດຕາມຂໍ້ຕົກລົງການຄ້າ EU-US ຫຼັງຈາກຊັກຊ້າ ແລະ ມີການໂຕ້ຖຽງກັນເປັນເວລາຫຼາຍເດືອນ ກ່ຽວກັບມາດຕະການປ້ອງກັນໃນກໍລະນີທີ່ສະຫະລັດບໍ່ປະຕິບັດຕາມຕົກລົງ; ຂໍ້ຕົກລົງເບື້ອງຕົ້ນນີ້ ເກີດຂຶ້ນຫຼັງຈາກທີ່ການເຈລະຈາກ່ອນໜ້ານີ້ລົ້ມເຫຼວ, ໂດຍ EP ຊຸກຍູ້ໃຫ້ມີກົນໄກຄຸ້ມຄອງທີ່ເຂັ້ມແຂງຂຶ້ນໃນກໍລະນີທີ່ວໍຊິງຕັນລະເມີດພັນທະສັນຍາ, ຂະນະທີ່ປະເທດສະມາຊິກ EU ກັງວົນວ່າຂໍ້ກຳນົດທີ່ເຂັ້ມງວດຂຶ້ນອາດເຮັດໃຫ້ສະຫະລັດບໍ່ພໍໃຈຫຼາຍຂຶ້ນ.

ປະທານາທິບໍດີສະຫະລັດ ໂດນັລ ທຣຳ ຂູ່ວ່າຈະຂຶ້ນພາສີນຳເຂົ້າສິນຄ້າຈາກ EU ຢ່າງສູງ ຫາກກຸ່ມປະເທດສະຫະພາບເອີຣົບ ບໍ່ສາມາດປະຕິບັດຕາມຂໍ້ຕົກລົງການຄ້າພາຍໃນວັນທີ 4 ກໍລະກົດນີ້.

ຕາມການລາຍງານຂອງລັດຖະສະພາເອີຣົບ, ຂໍ້ຕົກລົງນີ້ໄດ້ເສີມສ້າງຫຼາຍດ້ານຂອງຂໍ້ສະເໜີເດີມ ໂດຍມີຈຸດປະສົງເພື່ອແກ້ໄຂຄວາມບໍ່ແນ່ນອນໃນການຄ້າຂ້າມມະຫາສະໝຸດອັດລັງຕິກ ແລະ ປົກປ້ອງອຸດສາຫະກຳ, ກະສິກຳ, ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງ EU ໃຫ້ດີຍິ່ງຂຶ້ນ; ຂໍ້ຕົກລົງຍັງເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຂໍ້ກຳນົດການໂຈະພາຍໃຕ້ຂໍ້ຕົກລົງທາງການຄ້າ, ໂດຍອະນຸຍາດໃຫ້ຄະນະກຳມະການໂຈະສິດທິພິເສດດ້ານພາສີທີ່ມອບໃຫ້ສະຫະລັດ ຫາກສະຫະລັດບໍ່ສາມາດແກ້ໄຂຄວາມກັງວົນຂອງ EU ກ່ຽວກັບການປະຕິບັດດ້ານພາສີຕໍ່ສິນຄ້າສົ່ງອອກທີ່ກ່ຽວຂ້ອງຂອງ EU.

ນອກຈາກນີ້, ສະຖາບັນທັງສອງຂອງ EU ຕົກລົງທີ່ຈະສ້າງກົນໄກການປົກປ້ອງ; ຫາກສິດທິພິເສດດ້ານພາສີທີ່ມອບໃຫ້ສະຫະລັດ ນຳໄປສູ່ການນຳເຂົ້າເພີ່ມຂຶ້ນທີ່ອາດຈະສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ອຸດສາຫະກຳຂອງ EU ລວມເຖິງຂະແໜງກະສິກຳ, ຄະນະກຳມະການຈະສາມາດເລີ່ມການສືບສວນໄດ້.

ສຳລັບຂັ້ນຕອນຕໍ່ໄປ, ຮ່າງກົດໝາຍການຄ້າ EU-US ຈະຖືກນຳສະເໜີເພື່ອການລົງຄະແນນສຽງໃນກອງປະຊຸມໃຫຍ່ຂອງ EP ລະຫວ່າງວັນທີ 15-18 ມິຖຸນາ ກ່ອນທີ່ຈະສົ່ງໃຫ້ສະພາຂອງສະຫະພາບເອີຣົບເພື່ອຂໍການອະນຸມັດ; ເມື່ອໄດ້ຮັບການອະນຸມັດຢ່າງເປັນທາງການແລ້ວ, ກົດໝາຍໃໝ່ຈະມີຜົນບັງຄັບໃຊ້ໃນວັນຖັດຈາກການເຜີຍແຜ່ໃນວາລະສານທາງການຂອງ EU.

ສະຫະພາບເອີຣົບ ແລະ ສະຫະລັດອາເມລິກາບັນລຸຂໍ້ຕົກລົງທາງການຄ້າໃນເດືອນກໍລະກົດ 2025, ແຕ່ການອະນຸມັດໃນ EU ຖືກເລື່ອນອອກໄປຫຼາຍເດືອນ ທ່າມກາງຄວາມສຳພັນທີ່ເຄັ່ງຕຶງລະຫວ່າງສອງຝັ່ງມະຫາສະໝຸດອັດລັງຕິກ, ລວມທັງຄວາມເຄັ່ງຕຶງກ່ຽວກັບຂໍ້ຮຽກຮ້ອງຂອງ ທຣຳ ເລື່ອງເກາະ Greenland ແລະ ຄວາມບໍ່ແນ່ນອນທາງກົດໝາຍທີ່ກ່ຽວຂ້ອງກັບນະໂຍບາຍພາສີທີ່ກວ້າງຂວາງຂອງລັດຖະບານ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຕະຍາບັນແກ່ສົນທິສັນຍາວ່າດ້ວຍການຫຼີກເວັ້ນການເກັບອາກອນຊໍ້າຊ້ອນ ແລະ ການສະກັດກັ້ນການຫຼົບຫຼີກອາກອນລາຍໄດ້ ລະຫວ່າງລັດຖະບານ ແຫ່ງ ສປປລາວ ກັບ ລັດຖະບານແຫ່ງລາຊະອານາຈັກກຳປູເຈຍ; ການຂໍທິດຊີ້ນຳກ່ຽວກັບການຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການກົດໝາຍ ແລະ ຍຸຕິທຳ; ການສະເໜີສ້າງຕັ້ງຄະນະມິດຕະພາບລັດຖະສະພາລະຫວ່າງສະພາແຫ່ງຊາດລາວກັບລັດຖະສະພາຕ່າງປະເທດ ຂອງສະມາຊິກສະພາແຫ່ງຊາດ ຊຸດທີ X (2026-2030), ຄະນະສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ຂອງສະພາແຫ່ງຊາດລາວ; ແຜນການເຄື່ອນໄຫວວຽກງານຕ່າງປະເທດທີ່ເປັນຈຸດສຸມຂອງສະພາແຫ່ງຊາດ ໃນ 6 ເດືອນທ້າຍປີ 2026 ແລະ ລາຍງານຜົນສຳເລັດການເຂົ້າຮ່ວມກອງປະຊຸມ IPU ຄັ້ງທີ 152 ທີ່ປະເທດຕວັກກີ; ລາຍງານຜົນສຳເລັດແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X; ແລະ ບັນຫາສຳຄັນຈຳນວນໜຶ່ງ.

**(ນາງ ອາລິນ ສຸພົມມະປະດິດ)**



## ປິດກອງປະຊຸມ...

(ຕໍ່ຈາກໜ້າ 1)

ພັກ, ປະທານປະເທດ, ບັນດາສະຫາຍຄະນະບໍລິຫານງານສູນກາງພັກ ໄດ້ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ ສຸມໃສ່ຄົ້ນຄວ້າ ແລະ ປະກອບຄໍາຄິດຄໍາເຫັນດ້ວຍບັນຍາກາດຟົດຟື້ນ, ມີເນື້ອໃນເລິກເຊິ່ງ, ກົງໄປກົງມາ ຕໍ່ການນໍາພາ-ຊີ້ນໍາຂອງກົມການເມືອງແລະຄະນະເລຂາທິການສູນກາງພັກໃນໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມໃນ 6 ເດືອນທ້າຍປີ 2026; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ,ແຜນງົບປະມານ, ແຜນເງິນຕາໃນໄລຍະ6ເດືອນຕົ້ນປີ 2026 ແລະ ຕໍ່ການສະຫຼຸບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນະຊົນນະບົດ-ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ. ພ້ອມກັນນັ້ນ, ຍັງໄດ້ມີຄວາມເຫັນ ແລະ ເປັນເອກະພາບຮັບຮອງເອົາດ້ານຫຼັກການຕໍ່ຮ່າງມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ ໃນໄລຍະໃໝ່; ຮ່າງມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການຕ້ານ, ສະກັດກັ້ນ, ປ້ອງກັນ ແລະ ແກ້ໄຂພະຍາດອາຍາສິດ, ສໍ້ລາດບັງຫຼວງ, ປາກົດການຫຍໍ້ທໍ້ ແລະ ການຟຸມເຟືອຍ ໃນກົງຈັກການ ຈັດຕັ້ງ ແລະ ໃນສັງຄົມ ໂດຍມອບໃຫ້ຄະນະຮັບຜິດຊອບ ສືບຕໍ່ນໍາໄປປັບປຸງໃຫ້ມີເນື້ອໃນຄົບຖ້ວນສົມບູນ.

ໂອກາດດັ່ງກ່າວ, ສະຫາຍ ທອງລຸນ ສີສຸລິດ ໄດ້ມີຄໍາເຫັນຊີ້ນໍາ ໂດຍເນັ້ນໜັກຕື່ມບາງບັນຫາເພື່ອໃຫ້ບັນດາສະຫາຍຄະນະບໍລິຫານງານສູນກາງພັກ ນໍາໄປຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ຄື:

-ກົມການເມືອງ, ຄະນະເລຂາທິການສູນກາງພັກ ສືບຕໍ່ຊີ້ນໍາ, ຕິດຕາມ, ຊຸກຍູ້ ບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ກໍຄື ມະຕິ, ຄໍາສັ່ງ ແລະ ນິຕິກໍາຕ່າງໆ ທີ່ສູນກາງວາງອອກ ໃຫ້ແທດຕົວຈິງແລະມີປະສິດທິຜົນ;

- ສືບຕໍ່ຊີ້ນໍາໃຫ້ມີການແກ້ໄຂບັນຫາຕ່າງໆທີ່ຍັງຄົງຄ້າງໃຫ້ຕົກໄປເປັນກ້າວໆ ເປັນຕົ້ນແມ່ນບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ຮັບປະກັນບໍ່ໃຫ້ຂາດແຄນນໍ້າມັນເຊື້ອໄຟດ້ວຍມາດຕະການຮອງຮັບຕ່າງໆ, ຄຸ້ມຄອງລາຄາສິນຄ້າ, ຄ່າຄອງຊີບ ແລະ ອັດຕາແລກປ່ຽນ;

- ສຸມໃສ່ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ: ບັນຫາຢາເສບຕິດ, ອາວຸດເຖື່ອນ, ການລັກລອບຂຸດຄົ້ນແຮ່ທາດ ແລະຊັບພະຍາກອນທໍາມະຊາດອື່ນໆ ທີ່ຜິດກົດໝາຍ;

- ສືບຕໍ່ປາບປາມ ແລະ ແກ້ໃຫ້ຕົກບັນຫາສະແກມເມີ, ຄໍເຊັນເຕີ, ປຸ້ນຈີ້ຊີງຊັບ, ອຸບັດເຫດຕາມທ້ອງຖະໜົນ ແລະ ອື່ນໆ;

- ສືບຕໍ່ຊີ້ນໍາການປັບປຸງກົນໄກ, ແບບແຜນເຮັດວຽກ, ກົງຈັກ, ຄະນະຮັບຜິດຊອບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ຕົວຈິງ;

- ເອົາໃຈໃສ່ປັບປຸງລະບົບການເມືອງ, ການຄຸ້ມຄອງ-ບໍລິຫານຂອງອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໃຫ້ມີຄວາມໜັກແໜ້ນ-ເຂັ້ມແຂງ ໂດຍສະເພາະຢູ່ຂັ້ນຮາກຖານ ຕ້ອງຮັບປະກັນໃຫ້ປະຊາຊົນໄດ້ເຂົ້າເຖິງການບໍລິການຂອງພາກລັດແລະອົງການປົກຄອງ ຕ້ອງບໍລິການຮັບໃຊ້ປະຊາຊົນໃຫ້ດີຂຶ້ນ, ມີຄວາມໂລ່ງລ່ຽນ ແລະ ມີຄວາມວ່ອງໄວ-ທັນສະພາບການ ໃຫ້ເປັນຮູບປະທໍາ;

- ສືບຕໍ່ຊີ້ນໍາການຄົ້ນຄວ້າ ແລະ ສະເໜີວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ເປັນວາລະແຫ່ງຊາດ ສະເໜີຕໍ່ສະພາແຫ່ງຊາດຮັບຮອງເອົາເພື່ອດໍາເນີນການປະຕິບັດໂດຍໄວ;

- ສືບຕໍ່ຊີ້ນໍາການກະກຽມ ແລະ ດໍາເນີນກອງປະຊຸມຂອງວຽກງານອົງການພັກຂັ້ນສູນກາງຈໍານວນໜຶ່ງ ໃຫ້ສໍາເລັດຕາມແຜນ; ຊີ້ນໍາການຄົ້ນຄວ້າ, ກະກຽມເນື້ອໃນບັນດາມະຕິຂອງຄະນະບໍລິຫານງານສູນກາງພັກທີ່ຈະນໍາສະເໜີຕໍ່ກອງປະຊຸມສະໄໝວິສາມັນຂອງຄະນະບໍລິຫານງານສູນກາງພັກ ໃນເດືອນສິງຫານີ້;

- ກົມການເມືອງຊີ້ນໍາວຽກງານຮອບດ້ານຕາມແຜນ 6 ເດືອນທ້າຍປີ ແລະ ສືບຕໍ່ຊີ້ນໍາການກະກຽມ ແລະ ດໍາເນີນກອງປະຊຸມສູນກາງພັກຄັ້ງທີ 4 ສະໄໝ XII ໃນທ້າຍປີ ຕິດພັນກັບການດໍາເນີນຊີວິດການເມືອງພາຍໃນຄະນະບໍລິຫານງານສູນກາງພັກ ປະຈໍາປີ 2026 ໂດຍລົງເລິກຕີລາຄາຄວາມຮັບຜິດຊອບການເມືອງ ແລະ ໝາກຜົນຕົວຈິງໃນການນໍາພາຊີ້ນໍາວຽກງານທີ່ຕົນຮັບຜິດຊອບ.

ສະຫາຍເລຂາທິການໃຫຍ່ ໄດ້ເນັ້ນໜັກເຖິງຄວາມໝາຍຄວາມສໍາຄັນຂອງກອງປະຊຸມຄົບຄະນະ ຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ XII ວ່າ: ບັນດາຫົວຂໍ້ນໍາມາປຶກສາຫາລື ແລະ ຮັບຮອງເອົານີ້ ແມ່ນປັດໄຈສໍາຄັນຂອງການເປັນພັກກໍາອໍານາດທີ່ໝັ້ນຄົງ; ມະຕິທີ່ຈະອອກປະຕິບັດແມ່ນມະຕິທີ່ແນໃສ່ປັບປຸງປ່ຽນແປງຄວາມເຂັ້ມງວດວິທີການນໍາພາຂອງພັກ, ການບໍລິຫານຂອງລັດຖະບານ ແລະ ການຕິດຕາມກວດກາຂອງສະພາ, ການສ້າງກໍາລັງແຮງທີ່ແທ້ຈິງຂອງອົງການຈັດຕັ້ງການເມືອງ, ສັງຄົມ, ອົງການຈັດຕັ້ງມະຫາຊົນ; ການປະຕິບັດການຕົກລົງ ແລະ ມະຕິຂອງກອງປະຊຸມ ຄັ້ງທີ 3 ແມ່ນແກ່ນສານຂອງການປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ.

ໃນຕອນທ້າຍ, ສະຫາຍທອງລຸນ ສີສຸລິດ ໄດ້ຮຽກຮ້ອງໃຫ້ບັນດາສະຫາຍໃນຄະນະບໍລິຫານງານສູນກາງພັກ ພ້ອມກັນເຊີດຊູຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ຕັ້ງໜ້າບຸກບືນສູ້ຊົນ, ສຸມສະຕິປັນຍາ, ເຫື່ອແຮງທັງໝົດ ເຂົ້າໃນການນໍາພາ-ຊີ້ນໍາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ແລະ ມະຕິກອງປະຊຸມສູນກາງໃນຄັ້ງນີ້ ໃຫ້ມີຜົນສໍາເລັດເປັນຮູບປະທໍາຕາມຄາດໝາຍທີ່ວາງໄວ້.




#ບ່າວກະບື

**ຄໍາປຸ່ນ:** "ເປັນຫຍັງໂຕຄືມາຮ້ອງໄຫ້ເອົາແທ້ເອົາວ່າເວລາທ່ານ ແດດດຽວ, ມະຫາເສດຖີເງິນຕື້ຕາຍ, ລາວເປັນພີ່ນ້ອງໂຕຫວະ?"

**ເພື່ອງປິ່ນ:** "ບໍ່ດອກ, ຍ້ອນລາວບໍ່ແມ່ນພີ່ນ້ອງຂອງເຮົາຫັ້ນລະ ເຮົາຈຶ່ງຮ້ອງໄຫ້"

#BAOKBU

**KHAMPOON:** "Why are you weeping so much on the death of this billionnaire Mr Daeddio? was he related to you"

**PUONGPIN:** "No! I am weeping because he was not"



## ສໍາມະນາ...

(ຕໍ່ຈາກໜ້າ 1)

ມອນໄຊ ລາວມົວຊົ່ງ ຮອງປະທານສະພາແຫ່ງຊາດ ເຊິ່ງມີທ່ານ ນາງ ອໍາໄພວອນ ລ້ອມບຸນແພງ ປະທານກໍາມາທິການວັດທະນະທໍາ-ສັງຄົມ ແລະ ຊົນເຜົ່າ(ກວສຊ), ບັນດາທ່ານຮອງປະທານກໍາມາທິການແລະຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຮອງລັດຖະມົນຕີຈາກກະຊວງແລະອົງການທີ່ກ່ຽວຂ້ອງ, ຕາງໜ້າຈາກສະຖາບັນຄົ້ນຄວ້າເສດຖະກິດ-ສັງຄົມແຫ່ງຊາດ ແລະ ອົງການກາແດງແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເປັນກໍາມະການຂອງ ກວສຊ, ວິທະຍາກອນຈາກອົງການຈັດຕັ້ງສາກົນ ປະຈໍາ ສປປ ລາວ ແລະ ແຂກຖືກເຊີນ ເຂົ້າຮ່ວມຫຼາຍກວ່າ 100 ທ່ານ.

ທ່ານ ມອນໄຊ ລາວມົວຊົ່ງ ກ່າວວ່າ: ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ ແມ່ນບັນຫາລະດັບໂລກ, ບໍ່ພຽງແມ່ນບັນຫາສິ່ງແວດລ້ອມເທົ່ານັ້ນແຕ່ແມ່ນສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ເຊິ່ງສ່ວນໃຫຍ່ເພິ່ງພາທໍາມະຊາດເປັນບ່ອນທໍາມາຫາກິນ ເວົ້າລວມ, ເວົ້າສະເພາະເປັນໄພຂົ່ມຂູ່ທີ່ອັນຕະລາຍຕໍ່ເສດຖະກິດ-ສັງຄົມ. ດ້ວຍເຫດນັ້ນ, ໄລຍະຜ່ານມາ ສະພາແຫ່ງຊາດໄດ້ຕັ້ງໜ້າປະຕິບັດບັນດາພັນທະສາກົນກ່ຽວກັບບັນຫາການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ປາກົດຜົນເປັນຈິງ; ແຕ່ເຖິງຢ່າງໃດກໍຕາມ, ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າຍັງມີສິ່ງທ້າທາຍ ແລະ ຂໍ້ຈໍາກັດຫຼາຍດ້ານທີ່ຈະຕ້ອງໄດ້ຮ່ວມກັນພິຈາລະນາ, ຊອກຫາວິທີການປັບປຸງແກ້ໄຂ ແລະ ຍົກສູງປະສິດທິຜົນຂອງການປະຕິບັດໃຫ້ນັບມື້ດີຂຶ້ນ. ສະນັ້ນ, ໂດຍເຫັນໄດ້ຄວາມຈໍາເປັນ ແລະ ຄວາມສໍາຄັນຂອງວຽກງານດັ່ງກ່າວ, ສະພາແຫ່ງຊາດ ກໍຄືກໍາມາທິການວັດທະນະທໍາ-ສັງຄົມ ແລະ ຊົນເຜົ່າ ໄດ້ສົມທົບກັບອົງການເຮວວິຕາສ (Helvetas) ຈັດກອງປະຊຸມນີ້ຂຶ້ນ ເພື່ອຍົກສູງຄວາມຮັບຮູ້ ແລະ ເຂົ້າໃຈ, ເສີມສ້າງທັກສະ ແລະ ຄວາມເຂັ້ມແຂງ ກ່ຽວກັບການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດແລະການຫຼຸດຜ່ອນຄວາມສ່ຽງໄພພິບັດ ທີ່ມີຜົນກະທົບເກີດຂຶ້ນໃນສັງຄົມລາວ ພ້ອມທັງເປັນເວທີໃຫ້ໄດ້ມີໂອກາດພົບປະແລກປ່ຽນບົດຮຽນການເຄື່ອນໄຫວວຽກງານຕ່າງໆ ທີ່ຕິດພັນກັບການປະຕິບັດພາລະບົດບາດຂອງຕົນ.

ເນື້ອໃນເອກະສານທີ່ນໍາສະເໜີໃນກອງປະຊຸມຄັ້ງນີ້ ປະກອບມີ 14 ຫົວຂໍ້ ກວມເອົາ 3 ກຸ່ມບັນຫາໃຫຍ່ ຄື: 1. ດ້ານນະໂຍບາຍ ແລະ ນິຕິກໍາ: ທົບທວນການຈັດຕັ້ງປະຕິບັດຍຸດທະສາດ ແລະ ກົດໝາຍ ທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ; 2. ດ້ານເຕັກນິກ ແລະ ການປັບຕົວ: ຄົ້ນຄວ້າວິທີການຫຼຸດຜ່ອນທາດອາຍເຮືອນແກ້ວ, ການສ້າງຄວາມທົນທານ ແລະລະບົບພະຍາກອນໄພພິບັດທີ່ທັນສະໄໝ; 3. ດ້ານກົນໄກການປະສານງານ: ເພີ່ມທະວີການຮ່ວມມືລະຫວ່າງບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການກຽມພ້ອມຕອບໂຕ້ ແລະ ຟື້ນຟູຫຼັງໄພພິບັດ. ຜູ້ເຂົ້າຮ່ວມກໍໄດ້ຜັດປ່ຽນກັນປະກອບຄວາມຄິດເຫັນຢ່າງກົງໄປກົງມາ ແລະ ຊັກຖາມຕໍ່ຫົວຂໍ້ຕ່າງໆ ໃຫ້ມີຄວາມເຂົ້າໃຈຢ່າງກວ້າງຂວາງ ແລະ ເລິກເຊິ່ງ ພ້ອມທັງຖອດຖອນບົດຮຽນປະສົບການຕົວຈິງໃນການຕອບໂຕ້ຮັບມືກັບໄພພິບັດທາງດິນຟ້າອາກາດຢູ່ທ້ອງຖິ່ນຂອງຕົນ.

**(ສອນສັກ ວັນວິໄຊ)**

**ຄະນະບັນນາທິການ**

ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ